# ພັກປະຊາຊົນ ປະຕິວັດລາວ

ຄະນະບໍລິຫານງານພັກແຂວງເຊກອງ ເລກທີ 836/ຄບພຂ

ເຊກອງ, ວັນທີ 10 ຕຸລາ 2025

## ມະຕິ
## ກອງປະຊຸມໃຫຍ່ ຜູ້ແທນທົ່ວແຂວງເຊກອງ ຄັ້ງທີ XI ຂອງອົງຄະນະພັກແຂວງ

ກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ XI ຂອງອົງຄະນະພັກແຂວງ ໄດ້ໄຂຂຶ້ນທີ່ສະໂມສອນໃຫຍ່ຂອງແຂວງ, ໂດຍມີການເຂົ້າຮ່ວມຂອງຜູ້ແທນສົມບູນ 172 ສະຫາຍ, ຍິງ 33 ສະຫາຍ; ໃນນັ້ນມີຜູ້ແທນບົ່ງຕົວ 01 ສະຫາຍ, ຍິງ 0 ສະຫາຍ ເຊິ່ງເປັນຕົວແທນໃຫ້ແກ່ສະມາ ຊິກພັກທັງໝົດໃນທົ່ວແຂວງເຊກອງ 11,080 ສະຫາຍ, ພ້ອມທັງມີແຂກຖືກເຊີນເຂົ້າຮ່ວມທັງໝົດຈຳນວນ 27 ສະຫາຍ. ກອງປະຊຸມໃຫຍ່ຜູ້ແທນທົ່ວແຂວງເຊກອງຂອງພັກຄັ້ງນີ້ ມີແນວຄິດຊີ້ນຳລວມພາຍໃຕ້ຄຳຂວັນ **“ເພີ່ມທະວີບົດບາດ ແລະ ຄວາມສາມາດນຳພາຂອງຄະນະພັກທຸກຂັ້ນ, ເສີມຂະຫຍາຍທາດແທ້ມູນເຊື້ອວິລະຊົນເຂົ້າໃນທຸກຂົງເຂດວຽກງານ, ຍູ້ແຮງການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ, ຮັບປະກັນໃຫ້ປະຊາຊົນຫຼຸດພົ້ນຈາກຄວາມທຸກຍາກ”.**

ກອງປະຊຸມ ໄດ້ດຳເນີນພາຍໃຕ້ບັນຍາກາດແຫ່ງຄວາມສາມັກຄີເປັນເອກະພາບສູງ, ມີຄວາມຮັບຜິດຊອບອັນເຕັມປ່ຽມ, ຟົດຟື້ນ ແລະ ສ້າງສັນຢູ່ພາຍໃນ, ບວກກັບຄວາມສົນໃຈ, ເອົາໃຈໃສ່ ແລະ ຕິດຕາມຢ່າງໃກ້ຊິດ ຂອງທົ່ວສັງຄົມ, ກອງປະຊຸມໄດ້ສິ້ນສຸດລົງດ້ວຍຜົນສຳເລັດອັນຈົບງາມ ແລະ ເປັນເອກະສັນຮັບຮອງເອົາບັນດາເນື້ອໃນທີ່ສຳຄັນເຊິ່ງສະແດງອອກດັ່ງນີ້:

I. ກອງປະຊຸມໄດ້ຄົ້ນຄວ້າຢ່າງເລິກເຊິ່ງ ແລະ ໄດ້ຮັບຮອງເອົາຢ່າງເປັນເອກະສັນຕໍ່ບົດລາຍງານການເມືອງຂອງອົງຄະນະພັກແຂວງ ສະໄໝທີ X ທີ່ສະເໜີຕໍ່ກອງປະຊຸມໃຫຍ່ ຄັ້ງທີ XI ໂດຍໄດ້ສະແດງຄວາມເຫັນດີເຫັນພ້ອມນຳການສະຫຼຸບຕີລາຄາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງອົງຄະນະພັກແຂວງ, ເປັນຕົ້ນບັນດາຜົນງານອັນພົ້ນເດັ່ນທີ່ຍາດມາໄດ້ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພັດທະນາເສດຖະກິດ, ວຽກງານວັດທະນະທຳ-ສັງຄົມ, ວຽກງານກໍ່ສ້າງຮາກຖານການເມືອງ, ວຽກງານພັດທະນາຊົນນະບົດ-ແກ້ໄຂຄວາມທຸກຍາກ ແລະ ວຽກງານ 3 ສ້າງວຽກງານອົງການອຳນາດລັດ, ວຽກງານແນວລາວສ້າງຊາດວຽກງານອົງການຈັດຕັ້ງມະຫາຊົນ ແລະ ວຽກງານສະຫະພັນນັກຮົບເກົ່າ, ວຽກງານພົວພັນຕ່າງປະເທດ, ວຽກງານກໍ່ສ້າງພັກ-ພະນັກງານ ແລະ ວຽກງານກວດກາ. ບັນດາຜົນສຳເລັດທີ່ບັນລຸໄດ້ໃນໄລຍະ 5 ປີ ຜ່ານມາໄດ້ສ້າງພື້ນຖານ ແລະ ທ່ວງທ່າໃໝ່ໃຫ້ແກ່ການສືບຕໍ່ພັດທະນາແຂວງເຊກອງ ໄປຕາມທິດທາງ ແລະ ຈຸດໝາຍທີ່ວາງໄວ້.

ກອງປະຊຸມໄດ້ປະກອບຄຳເຫັນຢ່າງກົງໄປກົງມາ ກ່ຽວກັບຂໍ້ຄົງຄ້າງໃນການນຳພາ-ຊີ້ນຳຂອງອົງຄະນະພັກແຂວງ ເຊິ່ງເປັນສາເຫດຕົ້ນຕໍອັນໜຶ່ງທີ່ພາໃຫ້ການຈັດຕັ້ງປະຕິບັດວຽກງານຈຸດສຸມໃນບາງດ້ານບໍ່ບັນລຸຕາມຄາດໝາຍທີ່ວາງໄວ້ ແລະ ໄດ້ເລັ່ງທວງໃຫ້ມີມາດຕາການທີ່ແທດເໝາະ ເພື່ອດຳເນີນການແກ້ໄຂຂໍ້ຄົງຄ້າງທີ່ຜ່ານມາຢ່າງຈິງຈັງ, ແນໃສ່ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານໃນການນຳພາຂອງພັກ.

II. ກອງປະຊຸມໄດ້ຮັບຮອງເອົາທິດທາງແຜນການ 5 ປີ ນັບແຕ່ປີ 2026-2030, ກອງປະຊຸມໃຫຍ່ໄດ້ສະແດງຄວາມເຫັນດີເຫັນພ້ອມ ກັບແຜນພັດທະນາເສດຖະກິດດັ່ງ ກ່າວໂດຍມອບໃຫ້ຄະນະບໍລິຫານງານ

ພັກແຂວງ ນຳພາ-ຊີ້ນຳບັນດາພະແນກການ, ເມືອງຕາແສງ ຈັດຕັ້ງຜັນຂະຫຍາຍອອກເປັນແຜນງານ, ໂຄງການລະອຽດ ຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ ລວມທັງກຳນົດຂອບເຂດການລົງທຶນສຳລັບໂຄງການເຫຼົ່ານັ້ນຢ່າງມີຈຸດສຸມ ແລະ ແທດ ເໝາະກັບທ່າແຮງຕົວຈິງ ພ້ອມທັງປຸກລະດົມບັນດາຜູ້ປະກອບການ, ພາກສ່ວນເສດຖະກິດ ໃນທົ່ວປວງຊົນເຂົ້າໃສ່ການຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ. ຖືສຳຄັນການພັດທະນາເສດຖະກິດທີ່ເປັນທ່າແຮງປາຍແຫຼມຂອງແຂວງ ຕາມທິດສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ໃຫ້ເປັນຮູບປະທຳຕົວຈິງ ແລະ ເຮັດໃຫ້ກ້າວໄປເຖິງກຸ້ມຕົນເອງດ້ານລາຍຮັບ-ລາຍຈ່າຍງົບປະມານ ໂດຍສຸມໃສ່ທ່າແຮງດ້ານແຮ່ທາດ, ໄຟຟ້າພະລັງງານນ້ຳ-ພະລັງງານລົມ-ແສງຕາເວັນ, ດ້ານກະສິກຳ, ການເຊື່ອມໂຍງແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ ແລະ ການທ່ອງທ່ຽວໃຫ້ມີໝາກຜົນສູງ; ແກ້ໄຂຄວາມທຸກຍາກຂອງປະຊາຊົນ.

III. ກອງປະຊຸມໄດ້ຮັບຟັງການປະກອບຄຳເຫັນຈາກຕາງໜ້າ 05 ພາກສ່ວນອອ້ມຂ້າງແຂວງ ແລະ ຕົວແບບຈາກບາງເມືອງ, ການປະກອບຄຳເຫັນດັ່ງກ່າວ ລ້ວນແຕ່ມີຄວາມໝາຍອັນເລິກເຊິ່ງ ແລະ ລາຍງານຜົນສຳເລັດແຫ່ງການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງອົງຄະນະພັກແຂວງ ເຂົ້າໃນຂະແໜງການ, ທ້ອງຖິ່ນ ແລະ ຊີວິດຕົວຈິງຂອງປະຊາຊົນ ອັນໄດ້ເຮັດໃຫ້ກອງປະຊຸມໃຫຍ່ຄັ້ງນີ້ ມີເນື້ອໃນອຸດົມສົມບູນ ແລະ ມີຊີວິດຊີວາ.

IV. ກອງປະຊຸມໄດ້ຮັບຮອງເອົາບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກແຂວງສະໄໝທີ X ໂດຍຕີລາຄາສູງຕໍ່ຄວາມພະຍາຍາມໃນການນຳພາແຂວງເຊກອງ ສືບຕໍ່ກ້າວຂຶ້ນສູ່ຈຸດໝາຍທີ່ວາງໄວ້ ພ້ອມນັ້ນກໍຍັງຊີ້ໃຫ້ເຫັນເຖິງຈຸດອອ່ນ ແລະ ຂໍ້ຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂໃນຕໍ່ໜ້າໃຫ້ແຂງແຮງກວ່າເກົ່າ ແລະ ມີການຫັນປ່ຽນແປງໃໝ່ທີ່ຕັ້ງໜ້າ.

V. ຜູ້ແທນກອງປະຊຸມໄດ້ພ້ອມກັນໃຊ້ສິດປະຊາທິປະໄຕຂອງຕົນປ່ອນບັດເລືອກເອົາຄະນະບໍລິຫານງານພັກແຂວງຊຸດໃໝ່ ບົນພື້ນຖານຄວາມຖືກຕ້ອງສອດຄ່ອງກັບມາດຖານເງື່ອນໄຂທີ່ກຳນົດໄວ້, ເຊິ່ງຜູ້ສະໝັກເລືອກຕັ້ງທັງໝົດ 38 ສະຫາຍ, ຍິງ 08 ສະຫາຍ, ເລືອກໄດ້ 33 ສະຫາຍ, ຍິງ 07 ສະຫາຍ, ເຊິ່ງມີລາຍຊື່ລຸ່ມນີ້:

1. ສະຫາຍ ບຸນຫຼາຍ ບຸດທີ.
2. ສະຫາຍ ຂັນຕີ ສີລະວົງສາ.
3. ສະຫາຍ ສີສຸພັນ ມະຫາວົງ.
4. ສະຫາຍ ພ.ວ ທອງສີ ກຸນສະນະ.
5. ສະຫາຍ ນາງ ສີສະຫງ່າ ແກ້ວດວງດີ.
6. ສະຫາຍ ສາກົນ ພອນປະເສີດ.
7. ສະຫາຍ ດາວວີ ສວຍທະລັງສີ.
8. ສະຫາຍ ວົງເດືອນ ຈັນທະບຸດຊຽງ.
9. ສະຫາຍ ຕຸລາວັນ ວົງໄຊ.
10. ສະຫາຍ ນາງ ຄຳເສັງ ທຸມມະວົງສາ.
11. ສະຫາຍ ບຸນທະວີ ນະຄອນສິດ.
12. ສະຫາຍ ສົມເພັດ ເອີດລັດດາ.
13. ສະຫາຍ ບຸນທັນ ຈູມຈັນທະວົງ.
14. ສະຫາຍ ນາງ ວິໄລວັນ ດາລາສິນ.

15. ສະຫາຍ ຄຳໄພ ສີມມາວັດ.
16. ສະຫາຍ ແກດ ດາລາແພງ.
17. ສະຫາຍ ຄຳຮູ້ ອ່ອນມະນີ.
18. ສະຫາຍ ຄຳພາ ໄຊຍະແສງ.
19. ສະຫາຍ ພ.ວ ຄຳບານ ພົມມະນີວົງ.
20. ສະຫາຍ ເພັງນາ ຈັນທະພອນ.
21. ສະຫາຍ ຄຳແສນ ພະສະແຫວງ.
22. ສະຫາຍ ບຸນເລີຍ ພັນທະວົງ.
23. ສະຫາຍ ສາຍຄຳ ແກ້ວບຸນປານ.
24. ສະຫາຍ ແສງລາຕີ ຫຼອມຍະເດດ.
25. ສະຫາຍ ນາງ ມະໂນລາ ສຸດທິຈັກ.
26. ສະຫາຍ ແສງໂນພາ ມິກດາວົງ.
27. ສະຫາຍ ສຸພົນ ໄຊສະຫງ່າ.
28. ສະຫາຍ ວຽງໄຊ ວໍລະສີງ.
29. ສະຫາຍ ຈັນໄທ ຄຳມະນີວົງ.
30. ສະຫາຍ ໃຈເພັດ ພັນທະວົງ.
31. ສະຫາຍ ນາງ ເພັດດາວອນ ວາດສະຫງ່າ.
32. ສະຫາຍ ນາງ ຄຳໄພ ວິລະສານ.
33. ສະຫາຍ ດຣ ນາງ ລຳພັນ ໄຊຄຳມີ.

VI. ກອງປະຊຸມຄັ້ງປະຖົມມະລຶກ ຂອງຄະນະບໍລິຫານງານພັກແຂວງຊຽງຂວາງ ສະໄໝທີ XI ໄດ້ເລືອກເອົາຄະນະປະຈຳພັກແຂວງ ແລະ ເອກະສັນເລືອກເອົາເລຂາພັກແຂວງ, ຮອງເລຂາພັກແຂວງ ແລະ ເລືອກເອົາປະທານ ແລະ ຮອງປະທານຄະນະກວດກາພັກແຂວງ ດັ່ງນີ້:

**- ກອງປະຊຸມເລືອກເອົາຄະນະປະຈຳພັກແຂວງ ດ້ວຍການປ່ອນບັດໂດຍກົງ, ລົງຄະແນນສຽງປິດລັບ, ມີຜູ້ອອກສະໝັກເລືອກຕັ້ງ 13 ສະຫາຍ, ຍິງ 02 ສະຫາຍ, ເລືອກໄດ້ 11 ສະຫາຍ, ຍິງ 02 ສະຫາຍ ດັ່ງມີລາຍຊື່ລຸ່ມນີ້:**

1. ສະຫາຍ ບຸນຫຼາຍ ບຸດທີ.
2. ສະຫາຍ ຂັນຕີ ສີລະວົງສາ.
3. ສະຫາຍ ສີສຸພັນ ມະຫາວົງ.
4. ສະຫາຍ ພ.ວ ທອງສີ ກຸນສະນະ.
5. ສະຫາຍ ນາງ ສີສະຫງ່າ ແກ້ວດວງດີ.
6. ສະຫາຍ ສາກົນ ພອນປະເສີດ.
7. ສະຫາຍ ດາວວີ ສວຍທະລັງສີ.
8. ສະຫາຍ ວົງເດືອນ ຈັນທະບຸດຊຽງ.
9. ສະຫາຍ ຕຸລາວັນ ວົງໄຊ.
10. ສະຫາຍ ນາງ ຄຳເສັງ ທຸມມະວົງສາ.
11. ສະຫາຍ ບຸນທະວີ ນະຄອນສີດ.

**- ກອງປະຊຸມໄດ້ເລືອກເອົາເລຂາ ແລະ ຮອງເລຂາຄະນະບໍລິຫານງານພັກແຂວງ ດັ່ງມີລາຍຊື່ລຸ່ມນີ້:**

1. ສະຫາຍ ບຸນຫຼາຍ ບຸດທີ ເປັນເລຂາພັກແຂວງ
2. ສະຫາຍ ຂັນຕີ ສີລະວົງສາ ເປັນຮອງເລຂາພັກແຂວງ
3. ສະຫາຍ ສີສຸພັນ ມະຫາວົງ ເປັນຮອງເລຂາພັກແຂວງ

**- ກອງປະຊຸມເລືອກເອົາປະທານ ແລະ ຮອງປະທານຄະນະກວດກາພັກແຂວງ ດັ່ງມີລາຍຊື່ລຸ່ມນີ້:**

1. ສະຫາຍ ສາກົນ ພອນປະເສີດ ເປັນປະທານຄະນະກວດກາພັກແຂວງ
2. ສະຫາຍ ອ່ອນມະນີວັນ ຈັນດາວົງ ເປັນຮອງປະທານຄະນະກວດກາພັກແຂວງ
3. ສະຫາຍ ສົມສະຫວັນ ຊຸມພົນພັກດີ ເປັນຮອງປະທານຄະນະກວດກາພັກແຂວງ
4. ສະຫາຍ ສົມບູນ ບຸນປອນ ເປັນຮອງປະທານຄະນະກວດກາພັກແຂວງ

VII. ຜູ້ແທນກອງປະຊຸມ ໄດ້ພ້ອມກັນປ່ອນບັດເລືອກເອົາຜູ້ແທນສົມບູນ ແລະ ຜູ້ແທນສຳຮອງ ໄປຮ່ວມກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ, ລາຍລະອຽດມີດັ່ງນີ້:

**- ຜູ້ແທນສົມບູນ ມີ 19 ສະຫາຍ, ຍິງ 03 ສະຫາຍ:**

1. ສະຫາຍ ບຸນຫຼາຍ ບຸດທີ
2. ສະຫາຍ ສີສຸພັນ ມະຫາວົງ
3. ສະຫາຍ ພ.ວ ທອງສີ ກຸນຊະນະ
4. ສະຫາຍ ນາງ ສີສະຫງ່າ ແກ້ວດວງດີ
5. ສະຫາຍ ສາກົນ ພອນປະເສີດ
6. ສະຫາຍ ດາວວີ ສວຍທະລັງສີ
7. ສະຫາຍ ວົງເດືອນ ຈັນທະບຸດຊຽງ
8. ສະຫາຍ ຕຸລາວັນ ວົງໄຊ
9. ສະຫາຍ ນາງ ຄຳເສັງ ທຸມມະວົງສາ
10. ສະຫາຍ ບຸນທະວີ ນະຄອນສິດ
11. ສະຫາຍ ບຸນທັນ ຈູມຈັນທະວົງ
12. ສະຫາຍ ຄຳໄພ ສົມມາວັດ
13. ສະຫາຍ ຄຳຮູ້ ອ່ອນມະນີ
14. ສະຫາຍ ຄຳພາ ໄຊຍະແສງ
15. ສະຫາຍ ເພັງນາ ຈັນທະພອນ
16. ສະຫາຍ ບຸນເລີຍ ບັນທະວົງ
17. ສະຫາຍ ສາຍຄຳ ແກ້ວບຸນປານ
18. ສະຫາຍ ແສງລາຕີ ຫຼອມຍະເດດ
19. ສະຫາຍ ນາງ ມະໂນລາ ສຸດທິຈັກ

**- ຜູ້ແທນສຳຮອງມີ 3 ສະຫາຍ, ຍິງ 01 ສະຫາຍ:**

1. ສະຫາຍ ແສງໂນພາ ມີກດາວົງ
2. ສະຫາຍ ຈັນໄທ ຄຳມະນີວົງ
3. ສະຫາຍ ນາງ ເພັດດາວອນ ວາດສະຫງ່າ

VIII. ກອງປະຊຸມໃຫຍ່ພວກເຮົາຍັງໄດ້ເປັນກຽດຕ້ອນຮັບ ແລະ ຮັບຟັງການໂອ້ລົມຂອງສະ ຫາຍ ສອນໄຊ ສີພັນດອນ ກໍາມະການກົມການເມືອງສູນກາງພັກ, ນາຍົກລັດຖະ ມົນຕີ ແຫ່ງ ສປປ ລາວ ເຊິ່ງສະຫາຍໄດ້ສະແດງຄວາມເຫັນດີເປັນເອກະພາບຕໍ່ເນື້ອໃນ ແລະ ບັນຫາຕ່າງໆທີ່ໄດ້ຮັບຮອງໃນກອງປະຊຸມໃຫຍ່ ແລະ ສະແດງຄວາມຍ້ອງຍໍຊົມເຊີຍໃນຄວາມຮັບຜິດຊອບອັນສູງສົ່ງ ຂອງຜູ້ແທນກອງປະຊຸມໃຫຍ່ຄັ້ງນີ້ ພ້ອມທັງຕີລາຄາສູງຕໍ່ຜົນງານ ແລະ ໄຊຊະນະທີ່ແຂວງເຊກອງຍາດມາໄດ້ໃນໄລຍະຜ່ານມາ, ພ້ອມນັ້ນສະຫາຍຍັງໄດ້ສະແດງຄວາມເປັນຫ່ວງເປັນໄຍຕໍ່ບັນຫາດ້ານອ່ອນ-ຂໍ້ຄົງຄ້າງ ແລະ ບັນດາໄພອັນຕະລາຍທີ່ຂົ່ມຂູ່ຕໍ່ພັກ-ລັດເຮົາ, ທັງໃຫ້ທິດຊີ້ນໍາຕໍ່ວຽກງານແຕ່ລະດ້ານ ແລະ ສະຫາຍຍັງໄດ້ຝາກຄວາມເຊື່ອໝັ້ນຕໍ່ຄະນະບໍລິຫານງານພັກແຂວງຊຸດໃໝ່ ທີ່ຈະຕ້ອງໄດ້ສືບຕໍ່ນໍາພາຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງນີ້ ໃຫ້ປະກົດຜົນເປັນຈິງຕາມລະດັບຄາດໝາຍທີ່ກໍານົດໄວ້.

ກອງປະຊຸມໃຫຍ່ ຮຽກຮ້ອງມາຍັງຄະນະພັກທຸກຂັ້ນ, ສະມາຊິກພັກທຸກສະຫາຍ, ຈົ່ງເຊີດຊູຄວາມເປັນແບບຢ່າງນໍາໜ້າໃນທຸກດ້ານ, ນໍາພາມະຫາຊົນປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງນີ້ໃຫ້ປະກົດຜົນເປັນຈິງ, ພ້ອມກັນນີ້ກໍ່ຮຽກຮ້ອງມາຍັງພະນັກງານ, ນັກຮົບປະຊາຊົນບັນດາເຜົ່າຊາວແຂວງເຊກອງ ຈົ່ງເຊີດຊູນໍ້າໃຈຮັກຊາດ, ເສີມຂະຫຍາຍມານະຈິດບາກບັ່ນ, ບຸກບືນເຂົ້າໃສ່ການປະຕິບັດໜ້າທີ່, ທໍາມາຫາກິນ ແລະ ສ້າງສາພັດທະນາເພື່ອສ້າງແຂວງເຊກອງໃຫ້ໝັ້ງຄັ່ງເຂັ້ມແຂງ, ປະຊາຊົນຢູ່ດີກິນດີ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທໍາ ແລະ ສີ ວິໄລ.

**ຕ. ຄະນະບໍລິຫານງານພັກແຂວງ**

**ເລຂາພັກແຂວງ**

